Minnesota Department of Education

# ຄຳຖາມແລະຄຳຕອບກ່ຽວກັບ ACCESS ສຳລັບ ELLs ແລະ ACCESS ທີ່ເປັນທາງເລືອກສຳລັບ ELLs

## ACCESS ສຳລັບ ELLs ແລະ ACCESS ທີ່ເປັນທາງເລືອກສຳລັບ ELLs ແມ່ນຫຍັງ?

ACCESS ສຳລັບ ELLs ແລະ ACCESS ທີ່ເປັນທາງເລືອກສຳລັບ ELLs ແມ່ນການປະເມີນຄວາມສາມາດດ້ານ ພາສາອັງກິດ ທີ່ໃຊ້ເພື່ອໃຫ້ໄດ້ຕາມເກນມາດຕະຖານຕາມກົດໝາຍຂອງລັດຖະບານກາງ ແລະ ລັດ. ການປະເມີນຜົນ ເຫຼົ່ານີ້ ຖືກນຳໃຊ້ເພື່ອກວດກາຄວາມຄືບໜ້າຂອງນັກຮຽນພາສາອັງກິດໃນຂະນະທີ່ພວກເຂົາ ພັດທະນາທັກສະ ການສຶກ ສາທາງດ້ານພາສາດ້ວຍການ ອ່ານ, ການຂຽນ, ການຟັງ ແລະ ການປາກເວົ້າ.

## ເປັນຫຍັງພວກເຮົາຈຶ່ງຈັດການສອບເສັງເຫຼົ່ານີ້?

ACCESS ສຳລັບ ELLs ແລະຄະແນນຂອງ ACCESS ທີ່ເປັນທາງເລືອກສຳລັບ ELLs ສະໜອງຂໍ້ມູນທີ່ເປັນ ມູນຄ່າ ກ່ຽວກັບການພັດທະນາພາສາອັງກິດໃຫ້ແກ່ຄອບຄົວ ແລະ ໂຮງຮຽນ. ແຕ່ລະຄອບຄົວສາມາດນຳໃຊ້ຄະແນນ ແລະ ລາຍລະອຽດຂອງລະດັບຄວາມສາມາດ ເພື່ອເຂົ້າໃຈຄວາມກ້າວໜ້າທີ່ລູກຫຼານຂອງພວກເຂົາມີ ແລະ ຊອກຫາ ໂຮງຮຽນ ເພື່ອສະໜັບສະໜູນການຮຽນຮູ້ຂອງລູກຫຼານຂອງພວກເຂົາ.

ຄູສອນ ແລະໂຮງຮຽນ ສາມາດໃຊ້ຄະແນນເພື່ອກວດກາຄວາມກ້າວໜ້າຂອງນັກຮຽນໃນການໄດ້ຮັບພາສາອັງກິດ, ແຜນການສິດສອນ ແລະ ຕີລາຄາໂປຣແກຣມການພັດທະນາທາງດ້ານພາສາຂອງພວກເຂົາ. ນັກຮຽນຍັງສາມາດໃຊ້ ຄະແນນເຫຼົ່ານີ້ ເພື່ອກຳນົດວ່ານັກຮຽນກຽມພ້ອມທີ່ຈະອອກຈາກໂປຣແກຣມພາສາອັງກິດ ຫຼືບໍ່.

ຜົນການສອບເສັງໃນລະດັບຂອງໂຮງຮຽນ ແລະ ເມືອງຈະຖືກນຳໃຊ້ໃນການວັດແທກ ຄວາມໜ້າເຊື່ອຖື ຂອງ ລັດຖະບານກາງ ແລະ ຂອງລັດ.

## ແມ່ນໃຜຕ້ອງໄດ້ສອບເສັງວິຊາເຫຼົ່ານີ້?

ນັກຮຽນພາສາອັງກິດທຸກຄົນໃນຊັ້ນຮຽນ K–12 ຂອງໂຮງຮຽນລັດຖະບານ ຈະຕ້ອງໄດ້ເຂົ້າຮ່ວມໃນການປະເມີນຜົນ ຄວາມສາມາດທາງດ້ານພາສາອັງກິດໃນແຕ່ລະປີ. ມີການຍົກເວັ້ນພຽງແຕ່ສອງສາມຢ່າງເທົ່ານັ້ນ ທີ່ນັກຮຽນພາສາ ອັງກິດທຸກຄົນຈະເຂົ້າຮ່ວມ ACCESS ສຳລັບ ELLs.

ນັກຮຽນທີ່ເຂົ້າຮ່ວມໃນໂປຣແກຣມການສຶກສາສ່ວນບຸກຄົນ (IEP) ຫຼືແຜນ 504 ອາດຈະມີສິດໄດ້ຮັບສິ່ງອຳນວຍ ຄວາມສະດວກ. ສິ່ງອຳນວຍຄວາມສະດວກທີ່ເປັນເອກະສານ ລວມມີ ຕົວໜັງສືຕົວພິມໃຫຍ່ ແລະ ປຶ້ມຄູ່ມືການ ສອບເສັງ ທີ່ເປັນພາສາເບລ໌.

ນັກຮຽນບາງຄົນທີ່ມີຄວາມບົກພ່ອງທາງດ້ານຂະບວນການຮຽນຮູ້ທີ່ສຳຄັນອາດຈະມີສິດໄດ້ຮັບ ACCESS ທີ່ເປັນ ທາງເລືອກສຳລັບ ELLs ແທນ ACCESS ສຳລັບ ELLs. *ເຂົ້າເບິ່ງຄູ່ມືການເຂົ້າຮ່ວມ ACCESS ທີ່ເປັນທາງເລືອກ ສຳລັບ ELLs*. (ເຂົ້າໄປທີ່ Districts, Schools and Educators > Statewide Testing > Minnesota Tests.)

## ການສອບເສັງປະຕິບັດໄດ້ແນວໃດ?

ນັກຮຽນທຸກຄົນທີ່ໄດ້ດຳເນີນ ACCESS ສຳລັບ ELLs ຢູ່ຄອມພິວເຕີ, ແຕ່ວ່າມີຂໍ້ຍົກເວັ້ນໃຫ້ຂຶ້ນຢູ່ກັບຊັ້ນຮຽນ ແລະ ຂອບເຂດຂອງວິຊາຮຽນ (ຫັດອ່ານ, ຫັດຂຽນ, ຟັງຫຼືປາກເວົ້າ).

ຄູສອນຈະສອນໃຫ້ນັກຮຽນໂຕ-ຕໍ່-ໂຕສຳລັບນັກຮຽນທີ່ດຳເນີນ ACCESS ທີ່ເປັນທາງເລືອກສຳລັບ ELLs ໂດຍນຳ ໃຊ້ເອກະສານ.

## ນັກຮຽນສາມາດກະກຽມການສອບເສັງໄດ້ແນວໃດ?

ນັກຮຽນບໍ່ຈຳເປັນຕ້ອງຮຽນເອົາ ACCESS ສຳລັບ ELLs ຫຼື ACCESS ທີ່ເປັນທາງເລືອກສຳລັບ ELLs. ນັກຮຽນຈະໃຫ້ໂອກາດສຳລັບນັກຮຽນໃນການຝຶກເຮັດບົດສອບເສັງ ໂດຍໃຊ້ຕົວຢ່າງຄຳຖາມສອບເສັງ ເພື່ອໃຫ້ນັກຮຽນຄຸ້ນເຄີຍກັບສິ່ງທີ່ພວກເຂົາຕ້ອງເຮັດໃນມື້ສອບເສັງ.

## ຈະເຮັດແນວໃດຈຶ່ງຜ່ານການສອບເສັງ?

ນັກຮຽນທີ່ບໍ່ຜ່ານ ຫຼື ສອບເສັງຕົກໃນ ACCESS ສຳລັບ ELLs ຫຼື ACCESS ທີ່ເປັນທາງເລືອກສຳລັບ ELLs. ເນື່ອງຈາກວ່າການສອບເສັງວັດຄວາມສາມາດຂອງນັກຮຽນພາສາອັງກິດ ເພື່ອໃຫ້ເຂົ້າໃຈ ແລະ ເສີມສ້າງພາສາ ອັງກິດ, ນັກຮຽນແຕ່ລະຄົນໄດ້ຮັບຄະແນນຄວາມສາມາດທາງດ້ານພາສາຈາກ 1–6.

## ທັກສະອັນໃດທີ່ໄດ້ຮັບການປະເມີນໂດຍ ACCESS ແລະ ACCESS ທີ່ເປັນທາງເລືອກສຳລັບ ELLs?

ACCESS ສຳລັບ ELLs ວັດຄວາມສາມາດທາງດ້ານ ພາສາອັງກິດ ການອ່ານ, ການຂຽນ, ການຟັງ ແລະ ການປາກ ເວົ້າ ຢູ່ໃນມາດຕະຖານໃນການພັດທະນາພາສາອັງກິດ (English Language Development - ELD) ຂອງ WIDA. ເຂົ້າເບິ່ງມາດຕະຖານໃນການພັດທະນາພາສາອັງກິດ ຂອງ WIDA (ເຂົ້າໄປທີ່ WIDA > Standards & Instruction > English Language Development (ELD) Standards).

ACCESS ທີ່ເປັນທາງເລືອກສຳລັບ ELLs ວັດຄວາມສາມາດດ້ານ ການອ່ານ, ການຂຽນ, ການຟັງ ແລະ ການປາກ ເວົ້າ ໂດຍອີງໃສ່ຕົວຊີ້ວັດໃນການສະແດງຮູບແບບທີ່ເປັນທາງເລືອກ (Alternate Model Performance Indicators - AMPIs). ເຂົ້າເບິ່ງ AMPIs (ເຂົ້າໄປທີ່ WIDA > Assessment > Alternate ACCESS for ELLs).

## ຂ້ອຍສາມາດເຫັນຜົນຂອງ ACCESS ສຳລັບ ELLs ແລະ ACCESS ທີ່ເປັນທາງເລືອກສຳລັບ ELLs ສຳລັບລູກຫຼານ, ໂຮງຮຽນ ແລະ ເມືອງໄດ້ແນວໃດ?

ໂຮງຮຽນຂອງທ່ານຈະໄດ້ຮັບບົດລາຍງານຂອງນັກຮຽນແຕ່ລະຄົນສຳລັບລູກຫຼານຂອງທ່ານ ແລະ ຈະໃຫ້ຂໍ້ມູນນີ້ແກ່ ທ່ານ. ບົດລາຍງານສະບັບນີ້ ສະແດງໃຫ້ເຫັນຜົນການຮຽນຂອງລູກຫຼານຂອງທ່ານ ຈາກການປະເມີນຜົນ ແລະ ໃສ່ ຄະແນນສຳລັບແຕ່ລະຂົງເຂດທາງດ້ານພາສາ ພ້ອມທັງ ຄະແນນປະກອບ.

ຜົນຂອງການສອບເສັງສຳລັບໂຮງຮຽນ ແລະ ເຂດ ແມ່ນສະແດງໃຫ້ເຫັນຢູ່ໝວດ ບົດລາຍງານມີນີໂຊຕາ (Minnesota Report Card section) ຂອງສູນຂໍ້ມູນ (Data Center) ຢູ່ເວັບໄຊທ໌ຂອງ MDE. ໄປທີ່ໝວດ Minnesota Report Card ຂອງເວັບໄຊທ໌ MDE. (ເຂົ້າໄປທີ່ Data Center > Minnesota Report Card.)

---

*ສຳລັບຂໍ້ມູນເພີ່ມເຕີມ, ຈົ່ງຕິດຕໍ່ຫາ:*

Statewide Testing
mde.testing@state.mn.us

Minnesota Department of Education
1500 Highway 36 West
Roseville, MN 55113-4266
http://education.state.mn.us

*ກັນຍາ 2016*